**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສໍານັກງານນາຍົກລັດຖະມົນຕີ ເລກທີ 136 / ນຍ

ນະຄອນຫລວງວຽງຈັນ, ວັນທີ 30/07/ 2008

# ດໍາລັດ

## ວ່າດ້ວຍວັນນັກຮົບເສຍອົງຄະ ແລະ ເສຍສະຫລະຊີວິດເພື່ອປະເທດຊາດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;

- ອີງຕາມໜັງສືສະເໜີຂອງທ່ານ ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ສະບັບເລກທີ 1489/ກປທ, ລົງວັນທີ 24 ມິຖຸນາ 2008;

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດໍາລັດ :**

ມາດຕາ 1. ຕົກລົງເອົາວັນທີ 21 ມີນາ 1946 ເປັນວັນນັກຮົບເສຍອົງຄະ ແລະ ເສຍສະຫລະຊີວິດ ເພື່ອປະເທດຊາດ.

ມາດຕາ 2. ໃນວັນທີ 21 ມີນາ ຂອງທຸກໆປີ, ໃຫ້ບັນດາອົງການຈັດຕັ້ງຂອງພັກ, ລັດ ແລະ ຂອງສັງຄົມ ທັງສູນກາງ ແລະ ທ້ອງຖິ່ນ ຈັດຕັ້ງລະນຶກເຖິງວັນດັ່ງກ່າວ ໂດຍມີການໂຄສະນາເຜີຍແຜ່ມູນເຊື້ອ ແລະ ຄວາມໝາຍສໍາຄັນຂອງວັນດັ່ງກ່າວຢ່າງເລິກເຊິ່ງ, ເພື່ອເປັນການສຶກສາອົບຮົມໃຫ້ປວງຊົນລາວທັງຊາດ ມີນໍ້າໃຈຮັກຊາດ ແລະ ມີຄວາມເສຍສະຫລະເພື່ອປະເທດຊາດ.

ມາດຕາ 3. ມອບໃຫ້ກະຊວງປ້ອງກັນປະເທດ ເປັນຜູ້ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ.

ມາດຕາ 4. ບັນດາລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ຫົວໜ້າທະບວງ ແລະ ອົງການທຽບເທົ່າທະບວງ, ເຈົ້າຄອງນະຄອນຫລວງວຽງຈັນ, ເຈົ້າແຂວງໃນທົ່ວປະເທດ ແລະ ທຸກພາກສ່ວນຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດດໍາລັດສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 5. ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**